**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------------

# ບົດສະຫຼຸບ

## <u>ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ</u>

## <u>ລຶບລ້າງຄວາມທຸກຍາກ ແຫ່ງຊາດ</u>

## <u>ປະຈໍາສົກປີ 2008-2009 ແລະ ທິດທາງແຜນການ ສໍາລັບສົກປີ 2009-2010</u>

## <u>(ປະຕິບັດໂດຍ: ກອງທຶນຫຼຸດຜ່ອນຄວາມທຸກຍາກ-ທລຍ)</u>




ທີມງານບໍລິຫານສູນກາງ

ກະກຽມໂດຍ: ທີມງານຕິດຕາມ ແລະ ປະເມີນຜົນ

ພະຈິກ 2009

# ສາລະບານ

I. ສະຫຼຸບການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລົບລ້າງຄວາມ .......................... 3
ທຸກຍາກ ປະຈຳສົກປີ 2008-2009 ໂດຍ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)............................ 3
1.1 ຄວາມເປັນມາຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)...................................................... 3
1.2 ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ທລຍ ປະຈຳສົກປີ 2008-2009 (ຮອບວຽນທີ 6). 4
1.3 ປະສິດທິຜົນຂອງການຈັດຕັ້ງປະຕິບັດກອງທຶນຫຼຸດຜ່ອນຄວາມທຸກຍາກ......................................... 7
1.4 ກົນໄກການປະສານງານ, ການຕິດຕາມ, ການປະເມີນຜົນ, ການລາຍງານ ໃຫ້ແກ່ລັດຖະບານ ແລະ ອົງການຜູ້ໃຫ້ທຶນ. ..................................................................................................................... 7
1.5. ມາດຕະການຕ່າງໆໃນການແກ້ໄຂວຽກງານ ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ........................ 8
II. ທິດທາງແຜນການຈັດຕັ້ງປະຕິບັດ ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ສຳລັບປີ 2009-2010. .. 12
2.1. ທິດທາງແຜນການ........................................................................................................... 12
2.2. ລະດັບຄາດໝາຍຂອງແຜນການສົກປີ 2009-2010.................................................................. 12
2.3. ແຜນການເບີກຈ່າຍທຶນ ຂອງ ທລຍ ປະຈຳສົກປີ 2009/2010 ແບ່ງເປັນແຕ່ລະງວດ:................... 14
2.4. ສືບຕໍ່ການຈັດຕັ້ງປະຕິບັດໂຄງການ ສຳລັບຮອບວຽນທີ 6 ສົກປີ 2008/09. ................................ 15
2.5. ມາດຕະການໃນການຈັດຕັ້ງປະຕິບັດ. ..................................................................................... 15
2.5.1 ມາດຕະການຄຸ້ມຄອງບໍລິຫານກອງທຶນ ທລຍ ............................................................. 15
2.5.2 ມາດຕະການ ການເງິນ.......................................................................................... 15
2.5.3 ມາດຕະການພັດທະນາຊຸມຊົນ ດ້ວຍການດຳເນີນຂັບເຂື່ອນ ໂດຍຊຸມຊົນ. ..................... 15
2.5.4 ມາດຕະການເຕັກນິກ. ............................................................................................ 16
2.5.5 ມາດຕະການຕິດຕາມ-ປະເມີນຜົນ. ........................................................................... 16
2.5.6 ມາດຕະການປະສານງານ ລະຫວ່າງ ທລຍ ແລະ ຝ່າຍລັດ............................................ 17
2.5.7 ມາດຕະການຍາດແຍ່ງການສະໜັບສະໜູນດ້ານທຶນຮອນ ........................................... 17

## I. ສະຫຼຸບການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳສົກປີ 2008-2009

### 1.1 ຄວາມເປັນມາຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ).

ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ໄດ້ເລີ່ມສ້າງຕັ້ງນັບແຕ່ປີ 2003 ພາຍໃຕ້**ດຳລັດເລກທີ 073/ນຍ** ລົງວັນທີ 31 ພຶດສະພາ 2002. ດຳລັດດັ່ງກ່າວໄດ້ມີການດັດປັບທາງດ້ານພາລະບົດບາດ ແລະ ໜ້າວຽກບາງອັນດັ່ງມີເນື້ອໃນທີ່ລະບຸໄວ້ໃນດຳລັດເລກທີ 222/ນຍ ລົງວັນທີ 29/09/2006. ທລຍ ໄດ້ດຳເນີນການເຄື່ອນໄຫວວຽກງານຕາມກອບສັນຍາເງິນກູ້ຢືມ**ສະບັບເລກທີ 3675 LA** ໃນເດືອນ ກຸມພາ 2003, ຊຶ່ງມີມູນຄ່າທັງໝົດ 19,345,000 ໂດລາສະຫະລັດ, ໄລຍະໂຄງການ 5 ປີ (2003-2008) ໂດຍມີຈຸດປະສົງຄື:

(1) ຊ່ວຍເຫຼືອຊາວບ້ານສ້າງພື້ນຖານໂຄງລ່າງຂັ້ນຊຸມຊົນ ແລະ ສາມາດເຂົ້າເຖິງການບໍລິການໄດ້ດີກ່ວາເກົ່າ; (2) ສ້າງຂີດຄວາມສາມາດ ແລະ ໃຫ້ໂອກາດແກ່ບ້ານທຸກຍາກ ສາມາດວາງແຜນ, ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການລົງທຶນຂອງເຂົາເຈົ້າເອງແບບເປັນເຈົ້າຕົນເອງ ແລະ ໂປ່ງໃສ; ແລະ (3) ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງ/ສະຖາບັນທ້ອງຖິ່ນ ເພື່ອສະໜັບສະໜູນຂະບວນການຕັດສິນໃຈ ແລະ ແກ້ໄຂບັນຫາຢູ່ຂັ້ນບ້ານ, ເຂດ, ແລະ ເມືອງ, ໂດຍໃຫ້ປະຊາຊົນສ່ວນໃຫຍ່ ຊຶ່ງປະກອບມີຊາວບ້ານແມ່ຍິງ, ແລະ ຊົນເຜົ່າໄດ້ເຂົ້າຮ່ວມ. ພ້ອມກັນນັ້ນ ກໍ່ຍັງໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນຕໍ່ວຽກງານປູກຈິດສຳນຶກຊຸມຊົນດ້ານສິ່ງແວດລ້ອມເຊັ່ນ: ການສ້າງປ່າສະຫງວນ, ການປົກປັກຮັກສາປ່າຍອດນ້ຳ, ການສ້າງວັງສະຫງວນ ແລະ ສົ່ງເສີມການສ້າງຕັ້ງກຸ່ມທ້ອນເງິນ ໂດຍຜ່ານວິທີການສ້າງກະດານຂ່າວສື່ສານມວນຊົນຢ່າງກວ້າງຂວາງໃນຂອບເຂດຂອງໂຄງການ. ຜ່ານການເຄື່ອນໄຫວໃນໄລຍະ 5 ປີຜ່ານມາຮອດທ້າຍປີ 2008 ຈາກການປະເມີນຜົນຂອງຜູ້ໃຫ້ທຶນໄດ້ຢັ້ງຢືນວ່າຜ່ານມາກອງທຶນ ທລຍ ໄດ້ເຄື່ອນໄຫວຢ່າງມີປະສິດທິຜົນສູງ, ມີຄວາມໂປ່ງໃສ ສາມາດກວດສອບໄດ້ ພ້ອມນັ້ນກໍ່ຍັງປະຕິບັດທຸກຂັ້ນຕອນ ແລະ ລະບຽບການຂອງຜູ້ໃຫ້ທຶນຢ່າງເຄັ່ງຄັດ ກໍ່ຄືແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ທີ່ໄດ້ກຳນົດເອົາບັນຫາການແກ້ໄຂຄວາມທຸກຍາກເປັນບູລິມະສິດອັນດັບໜຶ່ງທີ່ຕິດພັນກັບວຽກພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຊຶ່ງ ທລຍ ໄດ້ສຳເລັດການເຄື່ອນໄຫວໃນ 252 ກຸ່ມບ້ານ, 21 ເມືອງ ພາຍໃນ 5 ແຂວງ, ຊຶ່ງເຮັດ ໃຫ້ 7 ເມືອງທຸກຍາກ ສາມາດຫຼຸດພົ້ນອອກຈາກຄວາມທຸກຍາກໄດ້ໂດຍພື້ນຖານ ( ເມືອງແອດ, ເມືອງສົບເບົາ, ເມືອງຄຳ, ເມືອງມູນລະປາໂມກ, ເມືອງປະທຸມພອນ, ເມືອງໂຂງ ແລະ ເມືອງຕຸ້ມລານ)

ຈາກຜົນງານດັ່ງກ່າວ ທະນາຄານໂລກ (WB) ຮ່ວມກັບອົງການພັດທະນາຂອງປະເທດສະວິດເຊີແລນ (SDC) ໄດ້ສືບຕໍ່ໃຫ້ການສະໜັບສະໜູນທຶນຊ່ວຍເຫຼືອລ້າຈຳນວນ 20 ລ້ານໂດລາສະຫະລັດ (ທະນາຄານໂລກ 15 ລ້ານໂດລາສະຫະລັດ ແລະ SDC 5 ລ້ານໂດລາສະຫະລັດ) ເຂົ້າໃນໄລຍະກະກຽມການສ້າງໂຄງການໃນໄລຍະສືບຕໍ່ເປັນເວລາ 3 ປີ ນັບແຕ່ປີ 2008-2011 ໂດຍສືບຕໍ່ດຳເນີນຕາມຈຸດປະສົງທີ່ໄດ້ກ່າວມາຂ້າງເທິງນັ້ນ.

## 1.2 ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ຫລຍ ປະຈຳສົກປີ 2008-2009 (ຮອບວຽນທີ 6).

ສົກປີ 2008/09 ແມ່ນປີທຳອິດຂອງການຈັດຕັ້ງປະຕິບັດກອງທຶນຫຼຸດຜ່ອນຄວາມທຸກຍາກ ໃນໄລຍະ 3 ປີກະກຽມໃຫ້ແກ່ການສືບຕໍ່ໂຄງການໃນໄລຍະສອງນັ້ນ. ຂະບວນການຈັດລຽງບູລິມະສິດ ແລະ ຂັ້ນຕອນຕັດສິນໂຄງການຍ່ອຍ ຄັ້ງສຸດທ້າຍ ຂັ້ນເມືອງ ໄດ້ຈັດຂຶ້ນໃນເດືອນພະຈິກ 2008 ໃນ 6 ແຂວງ ຜ່ານມາ (ແຂວງຫຼວງນໍ້າທາ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ). ໄດ້ຮັບຮອງເອົາ 355 ໂຄງການ, ຊຶ່ງມີມູນຄ່າທັງໝົດ 48,11 ຕື້ກີບ (ທຶນສະໜັບສະໜູນຈາກ ຫລຍ ມີປະ ມານ 40,82 ຕື້ກີບ ແລະ ທຶນປະກອບສ່ວນຈາກຊຸມຊົນ 7,28 ຕື້ກີບ).

ໃນຈຳນວນ 355 ໂຄງການໄດ້ຈັດແບ່ງອອກເປັນ 2 ປະເພດໂຄງການຄື: ການລົງທຶນໃສ່ໂຄງການຍ່ອຍດ້ານ ພື້ນຖານໂຄງລ່າງມີ 223 ໂຄງການຍ່ອຍຄິດເປັນມູນຄ່າທັງໝົດປະມານ 45,61 ຕື້ກີບ ຊຶ່ງໃນນັ້ນທຶນທີ່ໄດ້ ຮັບການສະໜັບສະໜູນຈາກ ຫລຍ ມີ 38,33 ຕື້ກີບ ຫຼື ເທົ່າກັບ 84% ແລະ ທຶນປະກອບສ່ວນຈາກຊຸມຊົນ 7,28 ຕື້ກີບ ຫຼື ເທົ່າກັບ 16% ແລະ ນອກຈາກນັ້ນກໍ່ຍັງມີໂຄງການຍ່ອຍດ້ານການຝຶກອົບຮົມທີ່ກອງທຶນ (ຫລຍ) ໄດ້ໃຫ້ການສະໜັບສະໜູນທຶນ ທັງໝົດ 100% ມີຈຳນວນ 132 ໂຄງການຍ່ອຍຊຶ່ງຄິດເປັນມູນຄ່າ ປະມານ 2,49 ຕື້ກີບ.

**ຕາຕະລາງ1: ຈຳນວນໂຄງການ ແລະ ງົບປະມານ ສຳລັບຮອບວຽນທີ 6**

ຫົວໜ່ວຍ: x1ກີບ

| ລ/ດ | ເມືອງ | ໂຄງການ | | ທຶນຈາກ ຫລຍ(ກີບ) | | ທຶນປະກອບສ່ວນ ຈາກປະຊາຊົນ ດ້ານໂຄງລ່າງ(ກີບ) | ລວມທຶນ ຫລຍ (ກີບ) | ລວມທັງໝົດ(ກີບ) |
|---|---|---|---|---|---|---|---|---|
| | | ຄລ | ຝອຮ | ດ້ານການຝຶກອົບຮົມ | ດ້ານໂຄງລ່າງ | | | |
| 1 | 2 | 3 | 4 | 5 | 6 | 7 | 8 = 5+6 | 9 = 7+8 |
| ຫົວພັນ | 5 | 71 | 20 | 488,771,552.00 | 9,949,974,956.03 | 2,436,711,436.85 | 10,438,746,508.03 | 12,875,457,944.87 |
| ຫຼວງນໍ້າທາ | 3 | 38 | 27 | 359,719,849.30 | 7,731,436,790.61 | 1,266,494,472.36 | 8,091,156,639.91 | 9,357,651,112.26 |
| ຊຽງຂວາງ | 3 | 27 | 17 | 301,300,016.00 | 5,393,178,224.45 | 1,107,092,116.11 | 5,694,478,240.45 | 6,801,570,356.56 |
| ສະຫວັນນະເຂດ | 4 | 45 | 26 | 588,211,051.20 | 8,600,219,780.55 | 1,253,129,321.00 | 9,188,430,831.75 | 10,441,560,152.75 |
| ສາລະວັນ | 2 | 20 | 16 | 294,222,075.00 | 3,922,279,155.49 | 637,742,197.60 | 4,216,501,230.49 | 4,854,243,428.09 |
| ຈຳປາສັກ | 2 | 22 | 26 | 463,119,930.00 | 2,736,896,447.34 | 581,478,689.49 | 3,200,016,377.34 | 3,781,495,066.83 |
| ລວມທັງໝົດ | 19 | 223 | 132 | 2,495,344,473.50 | 38,333,985,354.46 | 7,282,648,233.40 | 40,829,329,827.96 | 48,111,978,061.36 |
| ເປີເຊັນການລົງທຶນດ້ານຝຶກອົບຮົມ ແລະ ດ້ານພື້ນຖານໂຄງລ່າງ | | | | 6% | 94% | | | |
| ເປີເຊັນການລົງທຶນຂອງ ຫລຍ ແລະ ການປະກອບສ່ວນຂອງຊຸມຊົນ | | | | | | 16% | 84% | |

ໝາຍເຫດ:

ຄລ: ໂຄງການພື້ນຖານໂຄງລ່າງ

ຝອຮ : ໂຄງການຝຶກອົບຮົມ

ຂໍ້ມູນ: ໜ່ວຍງານຕິດຕາມ ແລະປະເມີນຜົນ ປັບປຸງປະຈຳເດືອນກັນຍາ 2009

ມາຮອດທ້າຍເດືອນ ຕຸລາ 2009, ໃນນັ້ນຈຳນວນ 335 ໂຄງການ, ມີ 354 ໂຄງການໄດ້ຮັບການຈັດຕັ້ງປະຕິບັດ. ໃນນັ້ນມີຈຳນວນໂຄງການທີ່ຖືກຈັດຕັ້ງປະຕິບັດສຳເລັດທັງໝົດແມ່ນ 335 ໂຄງ

ການ(94%). ເມື່ອທຽບໃສ່ຈໍານວນໂຄງການທີ່ສໍາເລັດໃນເດືອນທີ່ຜ່ານມາເຫັນວ່າເພີ່ມຂຶ້ນພຽງ 2% ຈາກ 329 ເພີ່ມມາເປັນ 335 ໂຄງການ, ມີ 18 ໂຄງການ ( 5% ) ສໍາເລັດຫລາຍກວ່າເຄິ່ງໜຶ່ງແລ້ວ, ນອກຈາກນັ້ນຍັງມີບາງໂຄງການທີ່ມີຄວາມຊັກຊ້າເຊັ່ນ: 1 ໂຄງການ ( 0.28 % ) ຫາກໍ່ເລີ່ມຈັດຕັ້ງປະຕິບັດ ແລະມີ ຄວາມຄືບໜ້າຕໍ່າກວ່າ 50%. ສ່ວນນຶ່ງໂຄງການທີ່ຍັງບໍ່ທັນໄດ້ເລີ່ມຈັດຕັ້ງປະຕິບັດແມ່ນໂຄງການສືບຕໍ່ກໍ່ສ້າງນໍ້າລິນຢູ່ແຂວງ ສາລະວັນ, ເມືອງ ຕະໂອ້ຍ, ເຂດເທດສະບານ ຮອດປະຈຸບັນໂຄງການດັ່ງກ່າວແມ່ນຖືກໂຈະ. ລາຍລະອຽດຂອງການຈັດຕັ້ງປະຕິບັດໂຄງການໂດຍແຍກເປັນຂະແໜງການສາມາດສັງລວມໄດ້ດັ່ງນີ້:

ໂຄງການກໍ່ສ້າງພື້ນຖານໂຄງລ່າງທັງໝົດ 223 ໂຄງການ ໄດ້ຜ່ານຂັ້ນຕອນປະມູນໝົດທຸກໂຄງການແລ້ວ ແລະ ສ່ວນໃຫຍ່ກໍ່ໄດ້ເລີ່ມຈັດຕັ້ງປະຕິບັດ. ໃນນັ້ນ, 210 ໂຄງການ ( 94% ) ໄດ້ປະຕິບັດສໍາເລັດແລ້ວ ແລະ 11 ໂຄງການ ( 5% ) ມີຄວາມຄືບໜ້າໃນການກໍ່ສ້າງຫລາຍກວ່າ 50%. ເຖິງຢ່າງໃດກໍ່ ຕາມຍັງມີບາງໂຄງການທີ່ຍັງດໍາເນີນຊັກຊ້າເຊັ່ນ: 1 ໂຄງການຫາກໍ່ເລີ່ມຈັດຕັ້ງປະຕິບັດ ແລະມີຄວາມຄືບໜ້າຕໍ່າກວ່າ 50%. ນອກຈາກນັ້ນ, ຍັງມີ 1 ໂຄງການແມ່ນຖືກໂຈະຄືໂຄງການກໍ່ສ້າງນໍ້າລິນຢູ່ເມືອງຕະໂອ້ຍແຂວງ ສາລະວັນ ຍ້ອນຄຸນນະພາບຂອງນໍ້າບໍ່ໄດ້ມາດຕະຖານ.

ໃນຈໍານວນໂຄງການເສີມສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມ ມີທັງໝົດ 132 ໂຄງການ, ມີ 125 ໂຄງການຫລືເທົ່າກັບ 95% ຈັດຕັ້ງປະຕິບັດສໍາເລັດ, 7 ໂຄງການ ຫຼື ເທົ່າກັບ 5% ໄດ້ເລີ່ມຈັດຕັ້ງປະ ຕິບັດ ແລະບາງໂຄງການກໍ່ໄດ້ສໍາເລັດຫລາຍກວ່າ 50 % ແລ້ວ.

ຕາຕະລາງທີ 2 : ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຮອບວຽນທີ 6

(ໂດຍແຍກຕາມຂະແໜງການ)

| ຂະແໜງການ | ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ | | | | |
|---|---|---|---|---|---|
| | 0 | ≤50 | ≥50 | 100% | ລວມ |
| ສຶກສາ | 0 | 0 | 4 | 61 | 65 |
| ຄົມມະນາຄົມ ແລະ ພະລັງງານ | 0 | 0 | 3 | 59 | 62 |
| ສາທາ | 1 | 0 | 2 | 77 | 80 |
| ດ້ານກະສິກໍາ | 0 | 1 | 2 | 13 | 16 |
| ຝຶກອົບຮົມ | 0 | 0 | 7 | 125 | 132 |
| ລວມ | 1 | 1 | 18 | 335 | 355 |

*ແຫລ່ງຂໍ້ມູນ: ທີ່ໜ່ວຍງານຕິດຕາມປະເມີນຜົນຂັ້ນສູກກາງ ວັນທີ 10 ພະຈິກ 2009*

ຕາຕະລາງທີ 3 : ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຮອບວຽນທີ 6

(ໂດຍແຍກຕາມແຕ່ລະແຂວງ)

| ຊື່ແຂວງ | ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ | | | | |
|---|---|---|---|---|---|
| | 0 | ≤50 | ≥50 | 100% | ລວມ |
| ຫລວງນ້ຳທາ | 0 | 0 | 8 | 57 | 65 |
| ຫົວພັນ | 0 | 0 | 0 | 91 | 91 |
| ຊຽງຂວາງ | 0 | 0 | 0 | 44 | 44 |
| ສະຫວັນນະເຂດ | 0 | 0 | 1 | 70 | 71 |
| ສາລະວັນ | 1 | 0 | 5 | 30 | 36 |
| ຈຳປາສັກ | 0 | 1 | 4 | 43 | 48 |
| ລວມ | 1 | 1 | 18 | 335 | 355 |

*ແຫລ່ງຂໍ້ມູນ: ທີ່ໜ່ວຍງານຕິດຕາມປະເມີນຜົນຂັ້ນສູກກາງ ວັນທີ 10 ພະຈິກ 2009*

ເບິ່ງດ້ານການເບີກຈ່າຍງົບປະມານ ມາເຖິງທ້າຍ ເດືອນ ຕຸລາ ປີ 2009, ເຊິ່ງງົບປະມານທີ່ແຂວງໄດ້ຖືກຮັບຈາກສູນກາງ ຈຳນວນ 35.11 ຕື້ກີບ ຫລື ເທົ່າກັບ 90% ຫລັງຈາກນັ້ນງົບປະມານດັ່ງກ່າວໄດ້ໂອນເຂົ້າຫາບັນຊີກຸ່ມບ້ານມີຈຳນວນທັງໝົດ 34.6 ຕື້ກີບ ຫຼື ເທົ່າກັບ 88% ຂອງຈຳນວນງົບປະມານທັງໝົດ 39,13[1] ຕື້ກີບ( ງົບປະມານຕົວຈິງພາຍຫຼັງການປະມູນ) ເພື່ອຈັດຕັ້ງປະຕິບັດໂຄງການ. ລາຍລະອຽດ ເບິ່ງໃນຕາຕະລາງ 3

ຕາຕະລາງ 4: ການໂອນເງິນຈາກ ທລຍ ສູນກາງ ໃນເດືອນ ກັນຍາ 2009

ຫົວໜ່ວຍ: X 1 ກີບ

| ຊື່ແຂວງ | ງົບປະມານທັງໝົດ | ແຂວງຮັບຈາກສູນກາງ | ແຂວງໂອນເຂົ້າກຸ່ມບ້ານ | % |
|---|---|---|---|---|
| ຫລວງນ້ຳທາ | 7,339,558,412 | 6,408,105,211 | 6,408,100,211 | 87% |
| ຫົວພັນ | 9,726,995,600 | 9,107,416,524 | 9,107,416,526 | 94% |
| ຊຽງຂວາງ | 5,369,848,899 | 5,230,739,207 | 5,125,781,402 | 95% |
| ສະຫວັນນະເຂດ | 9,394,778,883 | 8,499,861,143 | 8,493,711,522 | 90% |
| ສາລະວັນ | 4,275,440,444 | 2,903,796,568 | 2,523,836,073 | 59% |
| ຈຳປາສັກ | 3,080,494,969 | 2,966,019,442 | 2,966,099,404 | 96% |
| ລວມ | 39,187,117,207 | 35,115,938,095 | 34,624,945,138 | 88% |

*ແຫລ່ງຂໍ້ມູນ: ຈາກໜ່ວຍງານຕິດຕາມປະເມີນຜົນຂັ້ນແຂວງ ວັນທີ 10 ພະຈິກ 2009*

[1] ຕົວເລກປັບປຸງຄັ້ງວັນທີ 07/07/09 ຊຶ່ງເປັນຕົວເລກ ທີ່ເປັນເອກະພາບກັບໜ່ວຍງານການເງິນ, ສ່ວນຕົວເລກເດີມທີ່ເຄີຍລາຍງານ (38,93 ຕື້ກີບ) ເປັນຕົວເລກເບື້ອງຕົ້ນ.

## 1.3 ປະສິດທິຜົນຂອງການຈັດຕັ້ງປະຕິບັດກອງທຶນຫຼຸດຜ່ອນຄວາມທຸກຍາກ.

ສະຫຼຸບແລ້ວໃນ 5 ປີຜ່ານມາ (2003/08) ກໍ່ຄືປີທຳອິດຂອງໄລຍະກະກຽມ 3 ປີຕໍ່ໜ້າ 2008-2011 ເວົ້າລວມແລ້ວການຈັດຕັ້ງປະຕິບັດກອງທຶນຫຼຸດຜ່ອນຄວາມທຸກຍາກແມ່ນໄດ້ກະທົບໂດຍກົງເຂົ້າໃນ 21 ເມືອງຜ່ານມາຊຶ່ງໃນນັ້ນສາມາດເຮັດໃຫ້ 7 ເມືອງທີ່ທຸກຍາກ (ເມືອງສົບເບົາ, ແອດ, ຄຳ, ມູນລະປະໂມກ, ປະທຸມພອນ, ໄຊ ແລະ ຕຸ້ມລານ) ໄດ້ຫຼຸດພົ້ນອອກຈາກຄວາມທຸກຍາກດ້ານພື້ນຖານໂຄງລ່າງຂອງ 4 ຂະແໜງການຕົ້ນຕໍ (ສຶກສາ, ສາທາ, ໂຍທາ ແລະ ກະສິກຳ), ເຮັດໃຫ້ການເຂົ້າເຖິງດ້ານການບໍລິການໄດ້ 1,913 ບ້ານ, 252 ກຸ່ມບ້ານ, 21 ເມືອງ, ກວາມເອົາປະຊາຊົນຜູ້ໄດ້ຮັບຜົນປະໂຫຍດທາງກົງ ແລະ ທາງອ້ອມຈຳ ນວນທັງໝົດ 1,100 ບ້ານ.

ໃນສົກປີ 2008-2009 ຄາດຄະເນວ່າຜູ້ທີ່ຈະໄດ້ຮັບຜົນປະໂຫຍດຈາກ ທລຍ ຈຳນວນ 195 ກຸ່ມບ້ານ, 1,471 ບ້ານ ກວາມເອົາປະຊາຊົນຈຳນວນທັງໝົດ 620,614 ຄົນ/100,158 ຄອບຄົວ. ທັງໝົດເຫຼົ່ານີ້ແມ່ນມີປະສິດທິຜົນສູງ ທັງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໄລຍະ 5 ປີ (2001-2005 ແລະ 2006-2010) ຕາມທິດທາງທີ່ກຳນົດໄວ້ວ່າຮອດ ທ້າຍປີ 2010 ຕ້ອງສູ້ຊົນລຶບລ້າງຄວາມທຸກຍາກໃຫ້ບັນລຸໄດ້ໂດຍພື້ນຖານ. ນອກຈາກນັ້ນ, ກໍ່ຍັງເປັນການຈັດຕັ້ງແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ 8 ຂອງພັກຂອງລັດຖະບານ ສຳລັບໄລຍະ 2006/2010 ໃນແຜນງານລະດັບຊາດທີ 6 ທີ່ ວ່າ: “ແຜນງານແກ້ໄຂຄວາມທຸກຍາກຂອງຄອບຄົວ, ຂອງຊຸມຊົນ ແລະ ຍຸດຕິການຖາງປ່າເຮັດໄຮ່ປູກເຂົ້າ” ໂດຍສະເພາະແມ່ນການຈັດຕັ້ງປະຕິບັດໂຄງການຈຸດສຸມຂອງ ລັດຖະບານ: ຊຶ່ງແມ່ນໂຄງການທີ 3 ໂຄງການ ປັບປຸງການບໍລິຫານ ແລະ ນຳໃຊ້ກອງທຶນ ທລຍ ເພື່ອ ຫຼຸດຜ່ອນຄວາມທຸກຍາກຂອງຊຸມຊົນເຂົ້າສູ່ລວງເລິກລົງສູ່ຊຸມຊົນ ໃນເຂດຊົນນະບົດຫ່າງໄກສອກຫຼີກ, ຊົນເຜົ່າ ແລະ ແມ່ຍິງ.

*ຄາດຄະເນການຈັດຕັ້ງປະຕິບັດ 355 ໂຄງການຍ່ອຍ (223 ພື້ນຖານໂຄງລ່າງ ແລະ 132 ໂຄງການຝຶກອົບຮົມ) ປະຈຳສົກປີ 2008-2009 ຈະໄດ້ຖືກຈັດຕັ້ງປະຕິບັດທັງໝົດ ແລະ ສຳເລັດຜົນຕາມຄາດໝາຍທີ່ວາງໄວ້.*

## 1.4 ກົນໄກການປະສານງານ, ການຕິດຕາມ, ການປະເມີນຜົນ, ການລາຍງານ ໃຫ້ແກ່ລັດຖະບານ ແລະ ອົງການຜູ້ໃຫ້ທຶນ.

ພາຍຫຼັງທີ່ລັດຖະບານໄດ້ຮັບຮອງໂຄງການຫຼຸດຜ່ອນຄວາມທຸກຍາກ ກໍ່ໄດ້ມອບໝາຍໃຫ້ທີມງານ ທລຍ ສູນກາງ ຊຶ່ງເມື່ອກ່ອນພາຍໃຕ້ການຊີ້ນຳຂອງຄະນະກຳມະການແຜນການ ແລະ ການລົງທຶນ. ນາຍົກລັດຖະມົນຕີ ໄດ້ອອກດຳລັດສະບັບເລກທີ 222/ນຍ, ລົງວັນທີ 29 ກັນຍາ 2006 ໂດຍຫັນປ່ຽນຄວາມຮັບຜິດຊອບຈາກກະຊວງກຳມະການແຜນການ ແລະ ການລົງທຶນ ມາຢູ່ພາຍໃຕ້ການຊີ້ນຳຂອງສຳນັກງານນາຍົກລັດຖະມົນຕີ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຂອງກອງທຶນດຳເນີນໄປດ້ວຍດີນັ້ນ, ຄະນະຮັບຜິດຊອບກອງທຶນໄດ້ເອົາຈຸດປະສົງຂອງໂຄງການມາຜັນຂະຫຍາຍ ແລະ ສ້າງຕັ້ງກົນໄກການເຄື່ອນໄຫວຂອງຕົນໂດຍມີ ທລຍ ຂັ້ນສູນກາງ, ແຂວງ, ເມືອງ ແລະ ກຸ່ມບ້ານ ໂດຍ ຖືເອົາຄວາມຕ້ອງການທີ່ຈຳເປັນ ແລະ ຄວາມຮຽກຮ້ອງຕ້ອງການອັນຈຳເປັນພື້ນຖານມາຈາກບ້ານ ແລະ ກຸ່ມບ້ານ ຊຶ່ງເປັນຫົວໜ່ວຍພື້ນຖານຮັບຜິດຊອບ ໂດຍກົງໃນການຈັດສັນງົບປະມານ ໄປຄຽງຄູ່ກັບການສ້າງຂີດຄວາມອາດສາມາດ ແລະ ການ ມອບສິດ ໃຫ້ແກ່ກຸ່ມບ້ານ ແລະ ບ້ານເປັນຜູ້ບໍລິຫານຄຸ້ມຄອງການນຳໃຊ້ເງິນ ພ້ອມທັງເປັນເຈົ້າການໃນການ ຕິດຕາມການຈັດຕັ້ງປະຕິບັດໂຄງການໃນແຕ່ລະໄລຍະ ໂດຍມີພະນັກງານ ທລຍ ໃນແຕ່ລະຂັ້ນເປັນຜູ້ຊ່ວຍ ເຫຼືອ ສະໜັບສະໜູນ ແນໃສ່ເພື່ອເຮັດໃຫ້ວຽກງານໄດ້ຖືກຈັດຕັ້ງປະຕິບັດຕາມນະໂຍບາຍຂອງ ທລຍ ໂດຍມອບສິດຄວາມເປັນເຈົ້າໃນການຕັດສິນທຸກບັນຫາຂອງກຸ່ມບ້ານດ້ວຍຊຸມຊົນເອງ.

ເພື່ອເຮັດໃຫ້ວຽກງານດຳເນີນໄປໄດ້ດີນັ້ນ, ໂຄງຮ່າງການຈັດຕັ້ງຂອງ ທລຍ ໃນແຕ່ລະຂັ້ນປະກອບດ້ວຍ 4 ໜ່ວຍງານຄື: ໜ່ວຍງານບໍລິຫານ- ການເງິນ, ໜ່ວຍງານພັດທະນາຊຸມຊົນ, ໜ່ວຍງານວິຊາການ ແລະ ໜ່ວຍງານຕິດຕາມ-ປະເມີນຜົນ. ການດຳເນີນງານແມ່ນເປັນໄປຕາມແບບແຜນວິທີເຮັດວຽກສະເພາະການເຮັດວຽກເປັນທີມງານ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ບຸກຄົນຮັບຜິດຊອບ ຊຶ່ງທີມງານປະກອບດວ້ຍ: ຜູ້ອຳນວຍການບໍລິຫານ, ຮອງຜູ້ອຳນວຍການ, ທີ່ປຶກສາ, ຫົວໜ້າຈາກ 4 ໜ່ວຍງານ.

ພະນັກງານ ທລຍ ທັງໝົດທີ່ຖືກຊັບຊ້ອນຢູ່ໃນແຕ່ລະຕຳແໜ່ງງານລວມ 167 ຄົນ (ສູນກາງ, ແຂວງ ແລະ ເມືອງ), ໃນນັ້ນເປັນຍິງ 46 ຄົນ ຫຼືເທົ່າກັບ 28%. ນອກຈາກນັ້ນ, ກໍ່ຍັງໄດ້ເອົາໃຈໃສ່ວຽກງານ ສ້າງຄວາມເຂັ້ມແຂງຕິດພັນກັບການຕິດຕາມກວດກາເປັນແຕ່ລະໄລຍະ ເພື່ອຢັ່ງສືບຮູ້ຂໍ້ຄົງຄ້າງທີ່ເປັນອຸປະສັກໃຫ້ແກ່ການຈັດຕັ້ງປະຕິບັດໂຄງການ ເພື່ອຈະໄດ້ມີວິທີການແທດເໝາະແກ້ໄຂຢ່າງທັນການ. ການປະສານສົມທົບທາງພາຍໃນ ແລະ ພາຍນອກກໍ່ເປັນວຽກນຶ່ງທີ່ ທລຍ ໄດ້ເອົາໃຈໃສ່ກາຍເປັນສະຕິຂອງຕົນໃນການສ້າງບົດລາຍງານປະຈຳງວດ, ປະຈຳ 6 ເດືອນ, ປະຈຳປີ ໃຫ້ແກ່ຝ່າຍລັດຖະບານ ແລະ ອົງກອນຜູ້ໃຫ້ທຶນຢ່າງເປັນປະຈຳ ແລະ ຖືກຕາມກຳນົດເວລາ.

ນອກນັ້ນ ທລຍ ກໍ່ຍັງໄດ້ເຊື້ອເຊີນບັນດາຂະແໜງການກ່ຽວຂ້ອງເຂົ້າຮ່ວມກັນປຶກສາຫາລືທິດທາງ ກົນໄກການຈັດຕັ້ງ, ພາລະບົດບາດ, ແບບແຜນວິທີເຮັດວຽກ ແລະ ການປະສານງານລະຫວ່າງ ທລຍ ກັບກະຊວງກ່ຽວຂ້ອງ ເພື່ອສ້າງໄດ້ຄວາມເປັນເອກະພາບ, ຄວາມສະໜັບສະໜູນຊຶ່ງກັນ ແລະ ກັນສ້າງໄດ້ກຳລັງແຮງສັງລວມໃຫ້ແກ່ການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃນກຸ່ມບ້ານ, ບ້ານ ເຂດຊົນນະບົດຫ່າງໄກສອກຫຼີກ.

### 1.5. ມາດຕະການຕ່າງໆໃນການແກ້ໄຂວຽກງານ ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ.

(1) ມາດຕະການຄຸ້ມຄອງບໍລິຫານກອງທຶນ ທລຍ: ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ການບໍລິຫານກອງທຶນຫຼຸດຜ່ອນຄວາມທຸກຍາກໃຫ້ຖືກຕ້ອງສອດຄ່ອງກັບຈຸດປະສົງຂອງ ທລຍ ແລະ ແນວທາງນະໂຍບາຍຂອງລັດຖະບານກໍ່ຄືຜູ້ໃຫ້ທຶນ. ທີມງານບໍລິຫານ ທລຍ ໄດ້ຜັນຂະຫຍາຍສັນຍາ

ການໃຫ້ທຶນຊ່ວຍເຫຼືອລ້ານັ້ນມາເປັນແຜນດຳເນີນງານ ຊຶ່ງເປັນປື້ມຄູ່ມືກຳນົດກອບການດຳເນີນງານຂອງກອງທຶນ ໂດຍໄດ້ເນັ້ນໃສ່ມາດຕະຖານໃນການເກັບກຳຂໍ້ມູນມາແຕ່ກຸ່ມບ້ານ ແລະ ບ້ານ ແນໃສ່ເພື່ອກຳໄດ້ລະດັບຄວາມທຸກຍາກຂອງແຕ່ລະບ້ານ ແລະ ກຸ່ມບ້ານ, ເປີດກວ້າງຂະບວນການຈັດລຽງບູລິມະສິດຄວາມຕ້ອງການຂັ້ນບ້ານ ແລະ ກຸ່ມບ້ານ ຊຶ່ງທັງສອງວຽກງານນີ້ມີການພົວພັນກັນຢ່າງສະໜິດແໜ້ນຕໍ່ກັບການໃຫ້ທຶນສະໜັບສະໜູນດ້ານພື້ນຖານໂຄງລ່າງ ເພື່ອເຮັດໃຫ້ຊຸມຊົນ, ແມ່ຍິງ ແລະ ຊົນເຜົ່າເຂົ້າເຖິງບໍລິການ. ນອກຈາກນີ້, ກໍ່ຍັງໄດ້ສ້າງປື້ມຄູ່ມືໃນການບໍລິຫານ-ການເງິນ ແລະ ບັນຊີ ຊຶ່ງໄດ້ກຳນົດຂັ້ນຕອນລະອຽດ, ໂຄງປະກອບຂອງແຕ່ລະວຽກເຊັ່ນ: ການກຳນົດຕຳແໜ່ງງານໃນແຕ່ລະຂັ້ນ, ການປະມູນ, ການຈັດຊື້-ຈັດຈ້າງ, ການປະກອບເອກະສານຂໍເບີກຈ່າຍໃນແຕ່ລະງວດ, ການຂໍຄຳເຫັນເພີ່ມເຕີມຈາກຜູ້ໃຫ້ທຶນ ແລະ ລະບຽບການອື່ນໆ ພ້ອມທັງແບບຟອມຕ່າງໆທີ່ລ້ວນແລ້ວແຕ່ເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດຂອງກອງທຶນ ໃຫ້ເຂົ້າສູ່ລະບົບລະບຽບ ແລະ ມີແບບແຜນວິທີເຮັດວຽກກົມກຽວກັນແຕ່ເທິງລົງລຸ່ມ ແລະ ແຕ່ລຸ່ມຂຶ້ນເທິງ ຊຶ່ງສາມາດຈຳກັດປະກົດການຫຍໍ້ທໍ້ໄດ້ຢ່າງທັນການ;

(2) ມາດຕະການທາງດ້ານການເງິນ: ໄດ້ສ້າງລະບົບບັນຊີການເງິນ ນັບແຕ່ຂັ້ນກຸ່ມບ້ານຂຶ້ນມາຫາ ຂັ້ນເມືອງ, ຂັ້ນແຂວງ ແລະ ສູນກາງ ໂດຍມີຄະນະຮັບຜິດຊອບກຸ່ມບ້ານເປັນຜູ້ຄຸ້ມຄອງບໍລິຫານ ລາຍຮັບ-ລາຍຈ່າຍ ຕົວຈິງຕາມຈຳນວນທຶນທີ່ໄດ້ຮັບການສະໜັບສະໜູນຈາກ ທລຍ ແລະ ທຶນປະກອບສ່ວນຂອງປະຊາຊົນເຂົ້າໃນກຸ່ມບ້ານນັ້ນ ໂດຍເນັ້ນທີ່ຄວາມໂປ່ງໃສທີ່ສາມາດກວດສອບໄດ້, ການນຳໃຊ້ທຶນໃຫ້ກຸ້ມຄ່າ ແລະ ມີປະສິດທິຜົນສູງ. ພ້ອມນັ້ນກໍ່ໄດ້ຖືເອົາການຄວາມເຂັ້ມແຂງໃນການບໍລິຫານການເງິນໃຫ້ແກ່ກຸ່ມບ້ານ ແລະ ບ້ານ ໂດຍຕິດພັນກັບການສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນເປັນຕົ້ນ ແມ່ນການສ້າງພື້ນຖານລະບົບບັນຊີ-ການເງິນ, ວຽກງານກວດກາການເງິນຢ່າງເນື່ອງນິດລຽນຕິດ ແລະ ເປັນປະຈຳແຕ່ລະຂັ້ນຕົ້ນຕໍໃນຂັ້ນກຸ່ມບ້ານ ແລະ ບ້ານ. ໃນແຕ່ລະປີຍັງມີຜູ້ກວດສອບບັນຊີຈາກພາຍນອກ ດຳເນີນການ ກວດກາ. ສະເພາະສົກປີ 2008-2009 ນີ້ ໃນການກວດສອບບັນຊີກໍ່ໄດ້ສຳເລັດໃນເບື້ອງຕົ້ນແລ້ວໃນທົ່ວ ທລຍ;

(3) ມາດຕະການພັດທະນາຊຸມຊົນ ດ້ວຍການຂັບເຄື່ອນຂອງຊຸມຊົນ: ໂດຍຖືເອົາການສ້າງຄວາມເຂັ້ມແຂງ, ການມອບສິດ, ການມີສ່ວນຮ່ວມ, ການປູກຈິດສຳນຶກໃຫ້ແກ່ຊຸມຊົນມີສະຕິເປັນເຈົ້າເຂົ້າຮ່ວມໃນການສ້າງແຜນ, ການຕັດສິນ, ການຄວບຄຸມທຸກຂັ້ນຕອນປະຕິບັດໂຄງການ, ການຕິດຕາມ ແລະ ການບົວລະບັດຮັກສາໂຄງການ, ການສ້າງຂີດຄວາມສາມາດໃຫ້ແກ່ອຳນາດການປົກຄອງໃນການສະໜັບສະໜູນ ແລະ ການແກ້ໄຂຂໍ້ຂັດແຍ່ງໃນບ້ານດ້ວຍຄວາມຮັບຜິດຊອບຂອງບ້ານ, ກຸ່ມບ້ານ ແລະ ຊຸມຊົນນີ້ແມ່ນວຽກໜຶ່ງທີ່ໄດ້ມີການບຳລຸງຍົກລະດັບຢ່າງເປັນປະຈຳ ເພື່ອຫລີກລ້ຽງການເອື່ອຍອີງຂອງຊຸມຊົນຕໍ່ກອງທຶນ ກໍ່ຄືຂັ້ນເທິງ. ການບົວລະບັດຮັກສາໂຄງການຍ່ອຍ ເພື່ອໃຫ້ສາມາດນຳໃຊ້ໄດ້ແບບຍາວນານ ໂດຍຜ່ານຂະບວນການຂັບເຄື່ອນ

ໂດຍຊຸມຊົນ ແນໃສ່ສ້າງຄວາມເຂັ້ມແຂງ, ຄວາມເປັນເຈົ້າໃຫ້ກາຍເປັນສະຕິຄວາມຮັບຜິດຊອບຂອງຊຸມຊົນ. ນອກຈາກນັ້ນ, ທລຍ ຍັງໄດ້ສຸມໃສ່ວຽກງານການກະຈາຍ, ປະຊາສຳພັນ ແລະ ສື່ສານມວນຊົນຜ່ານທາງໂທລະພາບ, ວິທະຍຸ, ໜັງສືພິມຕ່າງໆ. ພິເສດແມ່ນການສື່ສານມວນຊົນໃນຂັ້ນກຸ່ມບ້ານດ້ວຍການເຮັດກະດານຂ່າວປະຈຳແຕ່ລະກຸ່ມບ້ານ ໄປຄຽງຄູ່ກັບການປູກຈິດສຳນຶກໃຫ້ແກ່ຊຸມຊົນໃນການຄຸ້ມຄອງນຳໃຊ້ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດແບບຍາວນານ ດ້ວຍວິທີການສ້າງປ່າຮັກສາແຫຼ່ງນ້ຳ, ປ່າຊຸມຊົນ, ວັງສະຫງວນ, ສິ່ງເສີມການຝຶກອົບຮົມວິຊາທີ່ຕິດພັນກັບການຜະລິດສະບຽງອາຫານ ແລະ ສ້າງລາຍຮັບ ໂດຍໄດ້ປຸກລະດົມການສ້າງຕັ້ງກຸ່ມທ້ອນເງິນຂອງກຸ່ມບ້ານ ດ້ວຍຄວາມສະໝັກໃຈ. ທັງນີ້ທັງນັ້ນກໍ່ເພື່ອແນໃສ່ເພີ່ມແຫຼ່ງອາຫານຈາກທຳມະຊາດທັງເປັນ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນເຂດຊົນນະບົດຫ່າງໄກສອກຫຼີກໃຫ້ດີຂຶ້ນເທື່ອລະກ້າວ;

(4) ມາດຕະການເຕັກນິກ: ເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຂອງ ທລຍ ກໍ່ຄືພະນັກງານຝ່າຍລັດ ນັບແຕ່ຂັ້ນສູນກາງລົງຮອດກຸ່ມບ້ານ ແລະ ບ້ານໃນການສຳຫຼວດ, ອອກແບບ, ຄິດໄລ່, ກຳນົດມາດຕະຖານ ແລະ ລາຄາ. ທຸກໆຂະບວນການສ້າງໂຄງການພື້ນຖານໂຄງລ່າງແມ່ນເປັນຂະບວນການລວມ ໂດຍມອບສິດໃຫ້ກຸ່ມບ້ານ ແລະ ບ້ານ ເປັນຜູ້ຕິດຕາມ ແລະ ຄວບຄຸມແຕ່ລະຂັ້ນຕອນການກໍ່ສ້າງຢູ່ໃນແຕ່ລະບ້ານຂອງຕົນ ໂດຍມີອຳນາດການປົກຄອງ ແລະ ພະນັກງານ ທລຍ ໃນແຕ່ລະເມືອງ ສົມທົບກວດສອບ ແລະ ຮັບຮອງພ້ອມກັນຢ່າງເປັນເອກະພາບ. ໃນຕົ້ນເດືອນ ກຸມພາ ຜ່ານມານີ້ ກໍ່ໄດ້ມີການຝຶກອົບຮົມໃຫ້ພະນັກງານວິຊາການ ທລຍ ແລະ ຝ່າຍລັດ ກ່ຽວກັບການນຳໃຊ້ ໂປຼແກຣມຊອຟແວ ໃນການອອກແບບ ແລະ ວິເຄາະໂຄງການ ຈຳນວນ 53 ຄົນມາຈາກ 6 ແຂວງ ເພື່ອຍົກລະດັບວຽກງານການກວດກາການອອກແບບ ແລະ ການກໍ່ ສ້າງໃຫ້ມີປະສິດທິຜົນກວ່າເກົ່າ;

(5) ມາດຕະການຕິດຕາມ-ປະເມີນຜົນ: ຄຽງຄູ່ກັບການວາງແຜນ ແລະ ຈັດຕັ້ງປະຕິບັດ ໃນແຕ່ລະຂັ້ນຕອນຂອງ ທລຍ ໄດ້ຖືເອົາວຽກງານການຕິດຕາມປະເມີນຜົນເປັນໃຈກາງ ຊຶ່ງຂັ້ນຕອນການຕິດຕາມແມ່ນເລີ່ມຕັ້ງແຕ່ຂັ້ນຕອນທຳອິດຂອງການວາງແຜນໃນແຕ່ລະຮອບວຽນ ນັບຕັ້ງແຕ່ການເກັບກຳຂໍ້ມູນບ້ານ, ເກັບກຳບູລິມະສິດຄວາມຕ້ອງການຂັ້ນບ້ານ, ແລະ ອື່ນໆ ຈົນເຖິງຂັ້ນຕັດສິນໂຄງການ, ປະມູນ ແລະ ການເບີກຈ່າຍເງິນຈາກສູນກາງເຂົ້າຫາບັນຊີກຸ່ມບ້ານ ເພື່ອຈັດຕັ້ງປະຕິບັດວຽກງານ. ຕະຫຼອດເຖິງບັນດາຂໍ້ມູນການຝຶກອົບຮົມຕ່າງໆ, ບັນດາຫຼັກສູດການເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ, ການແກ້ໄຂຂໍ້ຂັດແຍ່ງໃນແຕ່ລະຂັ້ນ. ຂໍ້ມູນຂອງແຕ່ລະຂັ້ນຕອນຕ່າງໆລ້ວນແລ້ວແຕ່ຖືກບັນທຶກໄວ້ ເພື່ອນຳມາວິໄຈ ແລະ ຜັນຂະຫຍາຍໃນຮູບແບບຂອງບົດລາຍງານ ອອກສູ່ອົງກອນທີ່ກ່ຽວຂ້ອງກໍ່ຄື ຫ້ອງການພາກລັດ ທີ່ກ່ຽວຂ້ອງ, ອົງການຜູ້ໃຫ້ທຶນ. ສຳລັບ ຮອບວຽນທີ 7 ທີມງານຕິດຕາມ-ປະເມີນຜົນໄດ້ລິເລີ່ມຝຶກອົບຮົມການເກັບກຳຂໍ້ມູນບ້ານ ແລະ ບູລິມະສິດຄວາມຕ້ອງການມາແຕ່ຂັ້ນບ້ານ

ແລະ ກຸ່ມບ້ານ ໃຫ້ແກ່ ທລຍ ແຂວງ ແລະ ເມືອງ, ຊຶ່ງ ທລຍ ແຂວງ ແລະ ເມືອງ ກຳລັງຜັນຂະຫຍາຍການຝຶກອົບຮົມໃຫ້ແກ່ຜູ້ປະສານງານກຸ່ມບ້ານ ແລະ ບ້ານ ພ້ອມທັງກະຈາຍວຽກງານດັ່ງກ່າວຢູ່ທຸກໆກຸ່ມບ້ານຂອງ 19ເມືອງ/195ກຸ່ມບ້ານ ຂອງ 6 ແຂວງ.

(6) ມາດຕະການປະສານງານ ລະຫວ່າງ ທລຍ ແລະ ຝ່າຍລັດ.

- ໄດ້ສົມທົບກັບກົມສຶກສານອກລະບົບ ແລະ ກົມອະນຸບານ-ປະຖົມ ກະຊວງສຶກສາ ໃນການວາງຫຼັກສູດການສ້າງຄູຝຶກໃຫ້ແກ່ແຂວງ ແລະ ເມືອງ ເພື່ອໄປຝຶກຕໍ່ບ້ານ ແລະ ກຸ່ມບ້ານ ໂດຍຖືເອົາແຂວງຫຼວງນ້ຳທາ ແລະ ແຂວງສາລະວັນເປັນຈຸດລິເລີ່ມການທົດລອງເພື່ອປູກຈິດສຳນຶກໃຫ້ແກ່ອຳນາດການປົກຄອງຂັ້ນເມືອງ, ແນວໂຮມ, ພໍ່ແມ່ນັກຮຽນ, ອຳນາດການປົກຄອງກຸ່ມບ້ານພ້ອມດ້ວຍເຖົ້າແກ່ແນວໂຮມ ໃນການປຸກລະດົມເດັກໃນເກນອາຍຸເຂົ້າໂຮງຮຽນໄດ້ເຂົ້າຮຽນໃຫ້ກາຍເປັນຂະບວນການກວ້າງຂວາງ.
- ໄດ້ປະສານສົມທົບກັບກົມການປົກຄອງທ້ອງຖິ່ນ, ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ສຳນັກງານນາຍົກລັດຖະມົນຕີ ແລະ ກົມແຜນສັງລວມ ກະຊວງແຜນການ ແລະ ລົງທຶນໃນການສ້າງຫລັກສູດ ແລະ ຂັ້ນຕອນການວາງແຜນກຸ່ມບ້ານ ແລະ ບ້ານໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.
- ໄດ້ມີການປະສານສົມທົບກັບບັນດາກະຊວງກ່ຽວຂ້ອງ ໃນການແລກປ່ຽນຂໍ້ມູນຂ່າວສານ ແລະການຮ່ວມມືນຳກັນໃນວຽກທີ່ພົວພັນຊຶ່ງກັນ ແລະ ກັນ ໃນການແກ້ໄຂຄວາມທຸກຍາກໃນກຸ່ມບ້ານແລະ ບ້ານ ທຸກຍາກ;

(7) ມາດຕະການຍາດແຍ່ງການສະໜັບສະໜູນດ້ານທຶນຮອນ.

ໄດ້ປຶກສາຫາລືນຳທະນາຄານໂລກ, ອົງການ SDC, DDF, UNDP, JSDF, EU ກ່ຽວກັບການນຳໃຊ້ທຶນຊ່ວຍໜູນເຊິ່ງກັນ ແລະ ກັນ ຕາມຄວາມອາດສາມາດປະກອບສ່ວນດ້ານທຶນຂອງອົງການຈັດຕັ້ງຜູ້ໃຫ້ທຶນເຂົ້າສູ່ຈຸດສຸມ ຢ່າງມີແຜນການ, ຢ່າງມີການຈັດສັນທຶນ, ຢ່າງມີຄວາມເປັນເອກະພາບ ແລະ ນຳໃຊ້ທຶນໃຫ້ເກີດຜົນປະໂຫຍດສູງສຸດຕໍ່ກັບການຫລຸດຜ່ອນຄວາມທຸກຍາກ. ການແລກປ່ຽນທັດສະນະໃນການກ້າວຂຶ້ນຈາກການແກ້ໄຂຄວາມທຸກຍາກ ດ້ານການເຂົ້າເຖິງໂຄງລ່າງມາຕິດພັນກັບການປັບປຸງຊີວິດການເປັນຢູ່ ດ້ວຍວິທີການຫັນປ່ຽນການບໍລິໂພກໃຫ້ຖືກຕາມຫຼັກການໂພສະນາການ. ພ້ອມທັງຊອກຫາຮູບແບບປະສານງານທີ່ສອດຄ່ອງກັບການຂະຫຍາຍຕົວຂອງສັງຄົມ. JSDF ໄດ້ສະເໜີເຈດຈຳນົງທີ່ຈະໃຫ້ທຶນໃຫ້ ທລຍ ຈັດຕັ້ງປະຕິບັດ ໂດຍຜ່ານທະນາຄານໂລກ ເຂົ້າໃນວຽກງານຍົກລະດັບຊີວິດການເປັນຢູ່ຂອງກຸ່ມບ້ານ ແລະ ບ້ານທຸກຍາກ ແນໃສ່ກິດຈະກຳໂພສະນາການ ແລະ ການຜະລິດສະບຽງອາຫານເປັນຕົ້ນຕໍ ໄປຄຽງຄູ່ກັບການສ້າງຄວາມເຂັ້ມແຂງ ແລະ ມອບສິດເປັນເຈົ້າການໃຫ້ແກ່ຊຸມຊົນໃນມູນຄ່າ 2,7 ລ້ານໂດລາສະຫະລັດ.

## II. ທິດທາງແຜນການຈັດຕັ້ງປະຕິບັດ ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ສຳລັບປີ 2009-2010.

### 2.1. ທິດທາງແຜນການ.

ເພື່ອສືບຕໍ່ຜັນຂະຫຍາຍ ແລະ ຮັບປະກັນໃຫ້ແນວທາງນະໂຍບາຍຂອງກອງປະຊຸມໃຫຍ່ຄັ້ງທີ 8 ຂອງພັກທີ່ໄດ້ກຳນົດໄວ້ວ່າ: "ສູ້ຊົນລຶບລ້າງຄວາມທຸກຍາກໃຫ້ໄດ້ໃນຂັ້ນພື້ນຖານ ໃນປີ 2010, ແກ້ໄຂໄດ້ຢ່າງສົມບູນ ໃນປີ 2015 (ຄວາມທຸກຍາກຢູ່ລະດັບ 15%) ແລະ ຫຼຸດພົ້ນອອກຈາກສະພາບດ້ອຍພັດທະນາ ໃນປີ 2020" ປະກົດຜົນເປັນຈິງຕາມຄາດໝາຍທີ່ວາງໄວ້ນັ້ນ. ກອງທຶນຫຼຸດຜ່ອນຄວາມທຸກຍາກຈະສູ້ຊົນເສີມຂະຫຍາຍຄວາມອາດສາມາດຂອງຕົນປະກອບສ່ວນເຂົ້າໃນການສ້າງພື້ນຖານໂຄງລ່າງຂະໜາດນ້ອຍ ເພື່ອເອື້ອອຳນວຍດ້ານການບໍລິການໃຫ້ແກ່ຊຸມຊົນສາມາດເຂົ້າເຖິງໄດ້, ສ້າງຄວາມເຂັ້ມແຂງໃຫ້ແກ່ອຳນາດການປົກຄອງໃນການປະກອບສ່ວນ ແລະ ແກ້ໄຂຂໍ້ຂັດແຍ່ງ ຕະຫຼອດຮອດການສ້າງຄວາມສາມາດໃຫ້ແກ່ທ້ອງຖິ່ນໃນການວາງແຜນ, ຕັດສິນ, ຈັດຕັ້ງປະຕິບັດໂຄງການ.

ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂອງ ທລຍ ໄປຕາມເງື່ອນໄຂການເຕີບໂຕຂອງວຽກງານ ໂດຍຖືສຳຄັນວຽກງານການສຶກສາ ນຳພາແນວຄິດເປັນກົກ ໄປຄຽງຄູ່ກັບການຍາດແຍ່ງການຊ່ວຍເຫຼືອມາສະໜັບສະໜູນໃຫ້ກາຍເປັນຮູບປະທຳ.

### 2.2. ລະດັບຄາດໝາຍຂອງແຜນການສົກປີ 2009-2010.

ໃນຮອບວຽນທີ 7 ນີ້ ວຽກງານ ທລຍ ໄດ້ກວມເອົາ 6 ແຂວງ, 19 ເມືອງ, 195 ກຸ່ມບ້ານພັດທະນາ ແລະ 1,425 ບ້ານ (ເຊິ່ງເປັນບ້ານທຸກຍາກແທ້ໆ 1073) ປະກອບດ້ວຍພົນລະເມືອງທັງໝົດ 621,603 ຄົນ, ໃນນັ້ນເປັນ ຍິງ 310,019 ຄົນ. ແຕ່ຫລັງຈາກກອງປະຊຸມສະພາບໍລິຫານຂອງ ທລຍ ຄັ້ງທີ 13 ທີ່ແຂວງຫລວງນ້ຳທາ ໃນຕົ້ນເດືອນ ກໍລະກົດ 2009 ທີ່ຜ່ານມາກອງປະຊຸມແມ່ນເຫັນດີໃຫ້ຂະຫຍາຍໜ້າວຽກຂອງກອງທຶນ ຫລຸດຜ່ອນຄວາມທຸກຍາກໄປຕື່ມ 2 ເມືອງຂອງ ແຂວງ ເຊກອງຄື: ເມືອງກະລຶມ ແລະ ດັກຈຶງ ເຊິ່ງປະກອບດ້ວຍ 19 ກຸ່ມບ້ານ ແລະ 142 ບ້ານ ແລະ ປະຊາກອນທັງໝົດສຳລັບສອງເມືອງດັ່ງກ່າວແມ່ນ 33,453 ຄົນ ເປັນຍິງ 17,170 ຄົນ.

ຕາຕະລາງ 5: ຂໍ້ມູນເມືອງເປົ້າໝາຍຂອງວຽກງານ ທລຍ ໃນຮອບວຽນທີ 7

| ແຂວງ: | ພົນລະເມືອງ | ຈຳນວນບ້ານ | ກຸ່ມບ້ານ | ເມືອງ |
|---|---|---|---|---|
| ຫຼວງນ້ຳທາ | 71,448 | 186 | 29 | ວຽງພູຄາ, ລອງ, ນາແລ |
| ຫົວພັນ | 177,187 | 478 | 70 | ຊຽງຄໍ້, ວຽງໄຊ, ຫົວເມືອງ, ຊຳໃຕ້, ວຽງທອງ |
| ຊຽງຂວາງ | 83,136 | 222 | 25 | ຄູນ, ໜອງແຮດ, ທ່າໂທມ |
| ສະຫວັນນະເຂດ | 152,657 | 328 | 51 | ເຊໂປນ,ນອງ, ວິລະບູລີ, ພິນ |

| | | | | |
|---|---|---|---|---|
| ສາລະວັນ | 37,973 | 110 | 9 | ຕະໂອ້ຍ, ສະໝ້ວຍ |
| ຈຳປາສັກ | 99,202 | 101 | 11 | ບາຈຽງ, ສຸຂຸມາ |
| ເຊກອງ | 33453 | 142 | 19 | ດັກຈຶງ ແລະກະລຶມ |
| **ລວມ 6 ແຂວງເກົ່າ** | **655,056** | **1,567** | **214** | **21 ຕົວເມືອງ** |

*ແຫລ່ງຂໍ້ມູນ: ຈາກຖານຂໍ້ມູນຂອງໜ່ວຍງານຕິດຕາມປະເມີນຜົນຂັ້ນສູກກາງ ວັນທີ 01ກັນຍາ2009*

## 2.3.ຈຳນວນໂຄງການຍ່ອຍ ແລະງົບປະມານ

ກອງປະຊຸມຕັດສິນໂຄງການຍ່ອຍຄັ້ງສຸດທ້າຍຂັ້ນເມືອງໄດ້ຈັດຂຶ້ນພ້ອມກັນໃນທົ່ວ 6 ແຂວງ (ຍົກເວັ້ນແຂວງເຊກອງ) ລະຫວ່າງ ວັນທີ່ 23 ຕຸລາ ຫາ 06 ພະຈິກ 2009 ທີ່ຜ່ານມາ, ໂດຍການເຂົ້າຮ່ວມຂອງທຸກໆພາກສ່ວນທີ່ຂ້ອງ. ຫລັງຈາກສຳເລັດການຈັດກອງປະຊຸມໃນແຕ່ລະແຂວງແລ້ວເຫັນວ່າ ໂຄງການຍ່ອຍທີ່ຈະຖືກຈັດຕັ້ງຢູ່ 19 ເມືອງຂອງ 6 ແຂວງດັ່ງກ່າວມາຂ້າງເທິງທັງໝົດ 423 ໂຄງການ, ໃນນັ້ນ 254 ໂຄງການເປັນໂຄງການກໍ່ສ້າງ ແລະ 169 ໂຄງການເປັນໂຄງການກ່ຽວກັບຝຶກອົບຮົມ, ມີມູນຄ່າທັງໝົດປະມານ 51.89 ຕື້ກີບ (ທຶນສະໜັບສະໜູນຈາກ ທລຍ ມີປະມານ 46.367 ຕື້ກີບ ແລະທຶນປະກອບສ່ວນຈາກຊຸມຊົນ ຈຳນວນ 5.53 ຕື້ກີບ).

ເມື່ອທຽບກັບໂຄງການໃນຮອບວຽນທີ 6 ແລ້ວ ເຫັນວ່າຈຳນວນໂຄງການທັງໝົດໄດ້ເພີ່ມຂື້ນຈຳນວນ 68 ໂຄງການ ຫລື 19% , ໃນນັ້ນ ໂຄງການກ່ຽວກັບພື້ນຖານໂຄງລ່າງເພີ່ມຈາກ 223 ມາເປັນ 254 ໂຄງການ ຫລື 13.3% ແລະ ຝຶກອົບຮົມເພີ່ມຈາກ 132 ມາເປັນ 169 ໂຄງການ ຫລື 28%.

**ຕາຕະລາງ 2: ສັງລວມໂຄງການຍ່ອຍ ແລະງົບປະມານຮອບວຽນ 7**

| ເມືອງ | ຈຳນວນໂຄງລ່າງ | ຝຶກອົບຮົມ | ລວມ | ລວມທຶນ ທລຍ | ທຶນປະກອບສ່ວນ | ເປີເຊັນ |
|---|---|---|---|---|---|---|
| ແຂວງຫລວງນ້ຳທາ | 40 | 37 | 77 | 5,722,915,080 | 932,742,684 | 14% |
| ແຂວງຫົວພັນ | 86 | 51 | 137 | 13,245,984,881 | 1,646,268,183 | 11% |
| ແຂວງຊຽງຂວາງ | 33 | 19 | 52 | 7,447,436,934 | 1,162,798,650 | 14% |
| ແຂວງສະຫວັນນະເຂດ | 53 | 21 | 74 | 9,906,204,918 | 708,738,184 | 7% |
| ແຂວງສາລະວັນ | 18 | 20 | 38 | 3,982,760,292 | 323,880,881 | 8% |
| ແຂວງຈຳປາສັກ | 24 | 21 | 45 | 6,062,681,025 | 756,267,362 | 11% |
| ລວມທັງໝົດ | 254 | 169 | 423 | 46,367,983,130 | 5,530,695,942 | 11% |

ແຫລ່ງຂໍ້ມູນ: ໜ່ວຍງານຕິດຕາມປະເມີນສູນກາງ ປະຈຳເດືອນພະຈິກ 2009

* ສຳລັບຮອບວຽນທີ 7 (2009-2010) ທລຍ ຄາດວ່າຈະສູ້ຊົນກໍ່ສ້າງພື້ນຖານໂຄງລ່າງໃຫ້ໄດ້ 168 ໂຄງການຍ່ອຍ, ຊຶ່ງຄາດຄະເນມູນຄ່າທັງໝົດ 35,29 ຕື້ກີບ. ໃນນັ້ນ, ຖ້າຈັດລຽງຕາມ ແຂວງຈະມີໂຄງປະກອບຄື:

- ແຂວງຫຼວງນ້ຳທາ 24 ໂຄງການຍ່ອຍ, ມູນຄ່າ 6,63 ຕື້ກີບ ຫຼື ເທົ່າກັບ 19%;
- ແຂວງຫົວພັນ 45 ໂຄງການຍ່ອຍ, ມູນຄ່າ 7,70 ຕື້ກີບ ຫຼື ເທົ່າກັບ 22%;
- ແຂວງຊຽງຂວາງ 28 ໂຄງການຍ່ອຍ, ມູນຄ່າ 5,48 ຕື້ກີບ ຫຼື ເທົ່າກັບ 16%;
- ສະຫວັນນະເຂດ 45 ໂຄງການຍ່ອຍ, ມູນຄ່າ 8,60 ຕື້ກີບ ຫຼື ເທົ່າກັບ 24%;
- ສາລະວັນ 16 ໂຄງການຍ່ອຍ, ມູນຄ່າ 3,20 ຕື້ກີບ ຫຼື ເທົ່າກັບ 9%;
- ແຂວງຈຳປາສັກ 10 ໂຄງການຍ່ອຍ, ມູນຄ່າ 3,64 ຕື້ກີບ ຫຼື ເທົ່າກັບ 10%;

*ໝາຍເຫດ: ການຄາດຄະເນໃນໄລຍະຕົ້ນແມ່ນຍັງບໍ່ທັນໄດ້ລວມແຂວງເຊກອງເຂົ້ານຳ*

## 2.3. ແຜນການເບີກຈ່າຍທຶນ ຂອງ ທລຍ ປະຈຳສົກປີ 2009/2010 ແບ່ງເປັນແຕ່ລະງວດ:

ຫົວໜ່ວຍ: X1 ຕື້ກີບ

| ລ/ດ | ລາຍການ | ຈຳນວນໂຄງການ | ມູນຄ່າລວມ | ການໃຊ້ຈ່າຍໃນແຕ່ລະງວດ ສົກປີ 2009-2010 | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| | | | | ງວດ 1 | % | ງວດ 2 | % | ງວດ 3 | % | |
| 1 | ພື້ນຖານຄ່າງລ່າງ | 168.00 | 35.29 | 14.12 | 40 | 17.65 | 50 | 3.53 | 10 | |
| 2 | ຝຶກອົບຮົມ | 134.00 | 3.93 | 2.75 | 70 | 1.18 | 30 | - | - | |
| ລວມທັງໝົດ | | | 39.22 | 16.87 | 42 | 18.82 | 49 | 3.53 | 9 | |

ຂໍ້ມູນ: ໜ່ວຍງານຕິດຕາມ ແລະປະເມີນຜົນ ປັບປຸງປະຈຳເດືອນກັນຍາ 2009

ນອກນັ້ນ ທລຍ ກໍ່ຍັງໃຫ້ທຶນສະໜັບສະໜູນການຝຶກອົບຮົມສົ່ງເສີມກິດຈະກຳສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງຊຸມຊົນ ຈຳນວນ 3.93 ຕື້ກີບ ໂດຍແຍກເປັນແຕ່ລະແຂວງຄືດັ່ງລຸ່ມນີ້:

- ແຂວງຫຼວງນ້ຳທາ *ມູນຄ່າ* 0,57 *ຕື້ກີບ* ຫຼືເທົ່າກັບ 15%;
- ແຂວງຫົວພັນ ມູນຄ່າ 0,89 ຕື້ກີບ ຫຼືເທົ່າກັບ 22%;
- ແຂວງຊຽງຂວາງ ມູນຄ່າ 0,60 ຕື້ກີບ ຫຼືເທົ່າກັບ 15%;
- ສະຫວັນນະເຂດ ມູນຄ່າ 1,16 ຕື້ກີບ ຫຼືເທົ່າກັບ 30%;
- ສາລະວັນ ມູນຄ່າ 0,32 ຕື້ກີບ ຫຼືເທົ່າກັບ 8%;
- ແຂວງຈຳປາສັກ ມູນຄ່າ 0,39 ຕື້ກີບ ຫຼືເທົ່າກັບ 10%;

* ທົດລອງສ້າງແຜນຜັງ ແລະ ແຜນຈັດສັນພັດທະນາທີ່ດິນຂອງບ້ານ ແລະ ກຸ່ມບ້ານ ໃນ 6 ກຸ່ມບ້ານຂອງ 6 ແຂວງ.

## 2.4. ສືບຕໍ່ການຈັດຕັ້ງປະຕິບັດໂຄງການ ສຳລັບຮອບວຽນທີ 6 ສົກປີ 2008/09.

ເອົາໃຈໃສ່ຕິດຕາມຊຸກຍູ້ ທັງປະເມີນຄວາມຄືບໜ້າ ແລະ ຜົນສຳເລັດຂອງ 355 ໂຄງການທີ່ກຳລັງຊຸ້ນຊ້ຽວປະຕິບັດ ສຳລັບຮອບວຽນທີ 6 ສົກປີ 2008/09 ໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້ ພ້ອມທັງກະກຽມການສັງເກດຕີລາຄາບັນດາໂຄງການເຫຼົ່ານີ້ຢ່າງຮອບດ້ານ ແນໃສ່ໃຫ້ເຫັນໄດ້ດ້ານຕັ້ງໜ້າ ເພື່ອຜັນຂະຫຍາຍອອກສູ່ວົງກວ້າງ, ເຫັນໄດ້ດ້ານຂໍ້ຄົງຄ້າງ ແລະ ສິ່ງທ້າທາຍເພື່ອປັບປຸງແກ້ໄຂໃຫ້ໄດ້ຢ່າງແທດເໝາະໃນຕໍ່ໜ້າ.

## 2.5. ມາດຕະການໃນການຈັດຕັ້ງປະຕິບັດ.

### 2.5.1 ມາດຕະການຄຸ້ມຄອງບໍລິຫານກອງທຶນ ທລຍ

ຄົ້ນຄວ້າ, ທົບທວນຄືນໃໝ່ເຖິງຈຸດປະສົງຂອງ ທລຍ ເພື່ອຍົກລະດັບຂຶ້ນເປັນໂຄງການລະດັບຊາດຕາມມະຕິຂອງກອງປະຊຸມສະພາບໍລິຫານກອງທຶນ ທລຍ ຄັ້ງທີ 12 ທີ່ຈັດຂຶ້ນຢູ່ແຂວງສະຫວັນນະເຂດ ແນໃສ່ໃຫ້ກອງທຶນ ທລຍ ເຊື່ອມສານເຂົ້າເປັນລວງດຽວກັນກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກດ້ານກົນໄກການຈັດຕັ້ງ, ພາລະບົດບາດ ແລະ ແບບແຜນວິທີເຮັດວຽກ ແລະ ການປະສານງານກັບກະຊວງກ່ຽວຂ້ອງຢ່າງກົມກຽວກວ່າເກົ່າ. ນອກຈາກນັ້ນ, ມີຄວາມຈຳເປັນຕ້ອງໄດ້ທົບທວນຄືນປຶ້ມຄູ່ມືດຳເນີນງານ ແລະ ລະບຽບການເບີກຈ່າຍງົບປະມານຂອງ ກອງທຶນ ທລຍ ເພື່ອເຮັດໃຫ້ການສ້າງແຜນປະຈຳປີຂອງ ທລຍ ໄປຕາມທິດລວງດຽວກັນກັບແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ຈຶ່ງມີຄວາມຈຳເປັນຕ້ອງໄດ້ດັດປັບຂັ້ນຕອນການຈັດລຽງບູລິມະສິດຄວາມຕ້ອງການທີ່ມາຈາກກຸ່ມບ້ານ ແລະ ການກຳນົດມາດຕະຖານຂອງກຸ່ມບ້ານ ແລະ ບ້ານທຸກຍາກໄປຕາມ ເງື່ອນໄຂໃໝ່ທີ່ລັດຖະບານວາງອອກ.

ສືບຕໍ່ປັບປຸງແບບແຜນວິທີເຮັດວຽກພາຍໃນ ທລຍ ສູນກາງ ໂດຍຖືເອົາວຽກງານປະສານສົມທົບດ້ານຂໍ້ມູນຕ່າງໆ ກ່ຽວກັບແຜນຄົນ, ແຜນວຽກ ແລະ ແຜນເງິນໃຫ້ກົມກຽວກັນກວ່າເກົ່າ ທັງຮັກສາໄດ້ຄວາມເປັນເອກະພາບ, ຄວາມວ່ອງໄວທາງດ້ານການສະໜອງຂໍ້ມູນ ທັງຮັບປະກັນຄວາມຊັດເຈນ. ສືບຕໍ່ບັນຈຸພະນັກງານເຂົ້າໃນຕຳແໜ່ງງານທີ່ຫວ່າງ ເປັນຕົ້ນແມ່ນຕຳແໜ່ງງານໃນທີມງານພັດທະນາຊົນນະບົດຂອງ ທລຍ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອຮັບປະກັນແຜນດຳເນີນງານຂອງ ທລຍ ໄດ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

### 2.5.2 ມາດຕະການ ການເງິນ.

ເພີ່ມສະຕິຕໍ່ລະບຽບການ ບັນຊີ-ການເງິນ ໃຫ້ແກ່ພະນັກງານໃນທຸກລະດັບ ດ້ວຍວິທີການເຜີຍແຜ່ລະບຽບການ ໄປຄຽງຄູ່ກັບການຖືເອົາວຽກງານກວດກາຢ່າງເປັນປະຈຳລຽນຕິດ ເພື່ອແນໃສ່ແກ້ໄຂປະກົດການຫຍໍ້ທໍ້ໄດ້ຢ່າງທັນການ.

### 2.5.3 ມາດຕະການພັດທະນາຊຸມຊົນ ດ້ວຍການດຳເນີນຂັບເຄື່ອນ ໂດຍຊຸມຊົນ.

ສືບຕໍ່ກຳນົດຍຸດທະສາດໃນການກະຈາຍຂໍ້ມູນຂ່າວສານ, ການສຶກສາ ແລະ ປະຊາສຳພັນ ໄລຍະສັ້ນ ແລະ ໃນຕໍ່ໜ້າ ຈາກນັ້ນເຜີຍແຜ່ໃຫ້ແກ່ພະນັກງານ ທລຍ ໃນທຸກລະດັບຢ່າງທົ່ວເຖິງ ພ້ອມທັງຮັບປະກັນໃຫ້

ບັນດາຂໍ້ມູນຂ່າວສານ ດັ່ງກ່າວໄດ້ລົງສູ່ກຸ່ມບ້ານ ແລະ ບ້ານ ດ້ວຍວິທີການຜະລິດເຄື່ອງມືສື່ສານຫຼາຍຫຼາກ ຮູບແບບ ໂດຍເນັ້ນທີ່ຄວາມງ່າຍດາຍ ເພື່ອການກະຈາຍຂ່າວໄວ ແລະ ຮັບປະກັນການເຂົ້າເຖິງໄດ້ທຸກຊຸມ ຊົນ ໂດຍຜ່ານກະດານຂ່າວກຸ່ມບ້ານເປັນຫຼັກ, ວິທະຍຸ, ໜັງສືພິມ, ວາລະສານ, ໂປດສະເຕີ, ຮູບພາບ ແລະ ໂທລະພາບ. ສືບຕໍ່ເອົາໃຈໃສ່ບັນຫາການສ້າງຄວາມເຂັ້ມແຂງໃຫ້ແກ່ອຳນາດການປົກຄອງຢ່າງຕໍ່ເນື່ອງກວ່າ ເກົ່າໃຫ້ກາຍເປັນເຈົ້າການໃນການປະກອບສ່ວນທັງແກ້ໄຂຂໍ້ຂັດແຍ່ງພາຍໃນບ້ານຢ່າງທັນການ. ນອກຈາກ ນັ້ນ, ກໍ່ສືບຕໍ່ດຳເນີນວຽກງານການກໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນໄດ້ຮຽນຮູ້ຢ່າງເລິກເຊິ່ງ ກ່ຽວກັບວິທີ ການບົວລະບັດຮັກສາ

ໂຄງການທີ່ໄດ້ມອບໂອນໃຫ້ຊຸມຊົນເປັນຜູ້ຄຸ້ມຄອງບໍລິຫານໄດ້ນຳໃຊ້ຢ່າງມີປະສິດທິຜົນ ແລະ ຍາວນານ.

### 2.5.4 ມາດຕະການເຕັກນິກ.

ສືບຕໍ່ຕິດຕາມບັນດາໂຄງການກໍ່ສ້າງທີ່ກຳລັງຈັດຕັ້ງປະຕິບັດໃນຮອບວຽນທີ 6 ໃຫ້ຮັບປະກັນໄດ້ຄຸນ ນະພາບທາງດ້ານເຕັກນິກ, ກຸ້ມຄ່າທາງດ້ານການລົງທຶນ ແລະ ຮັບປະກັນໄດ້ຄວາມໂປ່ງໃສ. ພ້ອມທັງຕິດ ຕາມຢ່າງໃກ້ຊິດການສ້ອມແປງ 11 ໂຄງການທີ່ຖືກຜົນກະທົບຈາກໄພນ້ຳຖ້ວມ ໃນໄລຍະຜ່ານມາໃຫ້ສຳ ເລັດຕາມກຳນົດເວລາ. ຈະສືບຕໍ່ສູ້ຊົນສ້າງປື້ມຄູ່ມືການບົວລະບັດຮັກສາພື້ນຖານໂຄງລ່າງທີ່ຈັດຕັ້ງປະຕິບັດ ສຳເລັດໂດຍມອບໃຫ້ຊຸມຊົນເປັນເຈົ້າຂອງ ເພື່ອໃຫ້ການນຳໃຊ້ໄດ້ຢ່າງມີຄຸນນະພາບ ແລະ ຍາວນານ.

### 2.5.5 ມາດຕະການຕິດຕາມ-ປະເມີນຜົນ.

ສືບຕໍ່ເອົາໃຈໃສ່ສັງລວມຂໍ້ມູນບ້ານ ແລະ ບູລິມະສິດຂັ້ນບ້ານໃຫ້ມີຄວາມຊັດເຈນ, ແທດເໝາະກັບສະ ພາວະຄວາມເປັນຈິງຂອງການພັດທະນາເສດຖະກິດ-ສັງຄົມ, ກຸ່ມບ້ານ ແລະ ບ້ານ ແນໃສ່ຮັບປະກັນການ ວາງແຜນຢ່າງຖືກຕ້ອງ ແລະ ແທດເໝາະກັບຄວາມອາດສາມາດ ການຄຸ້ມຄອງຂອງທ້ອງຖິ່ນ ແລະ ໃຫ້ສຳ ເລັດໃນຕົ້ນເດືອນ ພຶດສະພາ (ເດືອນ 5/2009).

ກວດກາຄືນບັນດາຂໍ້ມູນພື້ນຖານທີ່ມີຢູ່ກັບ ທລຍ ເພື່ອໃຫ້ເຫັນໄດ້ຂໍ້ມູນໃດທີ່ຍັງບໍ່ທັນພຽງພໍທີ່ຈະເປັນ ບ່ອນອີງໃຫ້ແກ່ການປະເມີນຜົນກະທົບຂອງ ທລຍ ທີ່ມີຕໍ່ຂະບວນການພັດທະນາກຸ່ມບ້ານ ແລະ ບ້ານກໍ່ຄື ປະຊາຊົນບັນດາເຜົ່າໃນກຸ່ມບ້ານດັ່ງກ່າວ. ວຽກນຶ່ງທີ່ສຳຄັນກໍ່ແມ່ນການຕິດຕາມ-ປະເມີນຜົນກະທົບຂອງ ກອງທຶນຫຼຸດຜ່ອນຄວາມທຸກຍາກ ທີ່ປະຕິບັດໃນໄລຍະ 5 ປີຜ່ານມາເພື່ອໃຫ້ເຫັນໄດ້ຜົນສຳເລັດ, ສິ່ງທ້າທາຍ ທີ່ຈະໄດ້ສືບຕໍ່ປັບປຸງໃນຕໍ່ໜ້າ ແນໃສ່ເຜີຍແຜ່ ແລະ ສະໜອງຂໍ້ມູນດັ່ງກ່າວ ເພື່ອແກ້ໄຂຂໍ້ຂ້ອງໃຈ ແລະ ຄວາມສົນໃຈຂອງມວນຊົນ ຕໍ່ກັບຜົນງານຂອງກອງທຶນກລຸດຜ່ອນຄວາມທຸກຍາກ ທີ່ຍາດມາໄດ້ໃນໄລຍະ 5 ປີຜ່ານມາ.

### 2.5.6 ມາດຕະການປະສານງານ ລະຫວ່າງ ທລຍ ແລະ ຝ່າຍລັດ.

ເອົາໃຈໃສ່ປະສານສົມທົບກັບຂະແໜງການກ່ຽວຂ້ອງ ເພື່ອນຳໃຊ້ກຳລັງແຮງສັງລວມເຂົ້າໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນໃນກຸ່ມບ້ານ ແລະ ບ້ານ ໃຫ້ໄປຕາມທິດທາງນະໂຍບາຍລວງດຽວກັນ ດ້ວຍວິທີການຊ່ວຍໜູນເຊິ່ງກັນ ແລະ ກັນ ໂດຍຖືເອົາວຽກງານສັງລວມ-ລາຍງານແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນ ເພື່ອຖອດໄດ້ບົດຮຽນທີ່ດີແລ້ວຂະຫຍາຍອອກສູ່ວົງກວ້າງ.

### 2.5.7ມາດຕະການຍາດແຍ່ງການສະໜັບສະໜູນດ້ານທຶນຮອນ

ສືບຕໍ່ປຸກລະດົມຂົນຂວາຍ ແລະ ຍາດແຍ່ງທຸກການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ທຸກພາກສ່ວນເສດຖະກິດ ເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ ບົນພື້ນຖານແນວທາງນະໂຍບາຍຂອງລັດຖະບານໃນການແກ້ໄຂຄວາມທຸກຍາກ ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສານຳໃຊ້ຊັບພະຍາກອນທຳມະຊາດຢ່າງຍາວນານ ທັງເປັນການປະກອບສ່ວນໃນການປົກປັກຮັກສາສິ່ງແວດລ້ອມ.

ນະຄອນຫຼວງວຽງຈັນ, ວັນທີ 16/11/2009

ຕ. ທີມງານບໍລິຫານ ທລຍ ສູນກາງ

**ສັງລວມ ແລະ ລາຍງານໂດຍ:**

**ທັດທະຈັນ ພິມພັນທະວົງ**